ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ: /ສວສ
ນະຄອນຫຼວງວຽງຈັນ, ວັນທີ:

ແຈ້ງການ

ເຖິງ : ທັນຕະແພດຈົບໃໝ່ ທີ່ ຕ້ອງການເຂົ້າຮ່ວມສອບເສັງລະດັບຊາດ ຄັ້ງທີ 7 ປີ 2026 .
ເລື່ອງ: ຂັ້ນຕອນການສະໝັກສອບເສັງລະດັບຊາດ ສຳລັບທັນຕະແພດ ຄັ້ງທີ 7 ປີ 2026.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບເລກທີ 1932/ສທ ,ລົງວັນທີ 17 ກໍລະກົດ (7) 2024;
- ອີງຕາມ ຂໍ້ຕົກລົງຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ວ່າດ້ວຍການອະນຸມັດ ສອບເສັງລະດັບຊາດ MCQs ແລະ OSCE ສຳລັບທັນຕະແພດ ທີ່ ຈົບໃໝ່ ຮຸ່ນທີ 7 ປີ 2026 ສະບັບເລກທີ 130/ສວສ ລົງ ວັນທີ 07 ສິງຫາ (8) 2026.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທັນຕະແພດທີ່ຈົບໃໝ່ໃຫ້ຊາບວ່າ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກຈະໄດ້ຈັດການສອບເສັງລະດັບຊາດ ສຳລັບທັນຕະແພດຮຸ່ນທີ 7 ປີ 2026 ຊຶ່ງຈະໄດ້ຈັດຂຶ້ນໃນມື້ວັນສຸກ,ເສົາ ທີ 04-05 ທັນວາ (12) 2026 ທີ່ ຄະນະທັນຕະແພດສາດ ມະຫາວິທະຍາໄລວິທະຍາສາດສຸຂະພາບ. ດັ່ງນັ້ນຈຶ່ງຂໍແຈ້ງໃຫ້ທັນຕະແພດທີ່ຈົບໃໝ່ປີ 2026 ທັງພາຍໃນ ແລະ ຕ່າງປະເທດຜູ້ທີ່ຍັງບໍ່ທັນໄດ້ເສັງ, ຜູ້ສອບເສັງບໍ່ຜ່ານໃນປີຜ່ານມາ, ຜູ້ທີ່ຮຽນຈົບຫຼັງປີ 2020 ເປັນຕົ້ນມາ ໃຫ້ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງຕາມວັນເວລາ ແລະ ສະຖານທີ່ໆໄດ້ກຳນົດໄວ້ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ດາວໂຫລດຮັບແບບຟອມສະໝັກສອບເສັງ ແລະ ບັດເຂົ້າຫ້ອງເສັງ (ບັດເຂົ້າຫ້ອງເສັງຕ້ອງປິ້ນເປັນ 2 ໜ້າ) ໄດ້ທີ່ລິ້ງ https://hpc.gov.la/la/dentist/examination;
2. ຜູ້ທີ່ສະໝັກສອບເສັງຂຽນແບບຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍຜ່ານ QR code ໃນມື້ທີ່ສົ່ງເອກະສານ (ຖ້າບໍ່ມີຊື່ທາງອອນລາຍຈະບໍ່ມີຊື່ສອບເສັງ);
3. ສົ່ງແບບຟອມຄຳຮ້ອງສອບເສັງທີ່ ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ໃນຮົ້ວຂອງກະຊວງສາທາລະນະສຸກຕຶກໃໝ່) ແຕ່ວັນສຸກ ທີ 06 ຫາ 20 ພະຈິກ (11) 2026;
4. ຄ່າລົງທະບຽນສະໝັກສອບເສັງແມ່ນ 350.000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນມາຮັບເອົາຟອມສະໝັກສອບເສັງ;
5. ກ່ອນມື້ສອບເສັງຕ້ອງກຽມອຸປະກອນຮັບໃຊ້ຢ່າງພຽງພໍ ເຊັ່ນ : ສໍດຳ B2, ຢາງລົບ ແລະ ອຸປະກອນແຫຼມສໍ;
6. ມື້ສອບເສັງນັກສອບເສັງຕ້ອງນຸ່ງຖືໃຫ້ເປັນລະບຽບ ພາກປະຕິບັດຕົວຈິງຕ້ອງນຸ່ງເສື້ອກາວ ແລະ ພາກທິດສະດີຕ້ອງນຸ່ງເສື້ອຂາວ, ຜູ້ຍິງຕ້ອງນຸ່ງສີ້ນ ແລະ ຜູ້ຊາຍຕ້ອງໃສ່ໂສ້ງດຳຂາຍາວ.

ປະທານ

<u>ຕິດຕໍ່ປະສານງານ ແລະ ອອດແອຟ</u> :

1. ດຣ.ເລກ ສີດາວົງ 55008875
2. ດຣ.ຕົ້ນ ບຸບຜາ 95396733

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ
ຄະນະກຳມະການວິຊາຊີບທັນຕະແພດ ເລກທີ: /ຄວທ.

ນະຄອນຫຼວງວຽງຈັນ,ວັນທີ : 06 ພະຈິກ (11) 2026

ໜັງສືສະເໜີຂໍຄຳເຫັນ

ວັນ ເດືອນ ປີ	ເອກະສານຈາກຄະນະກຳມະການວິຊາຊີບທັນຕະແພດ
	<u>ເນື້ອໃນເອກະສານ</u> : ຂໍອະນຸຍາດແຈ້ງເຖິງ : '' ທັນຕະແພດຈົບໃໝ່ ທີ່ ຕ້ອງການສອບເສັງລະດັບຊາດສຳລັບ ຮຸ່ນ ທີ 7 ປີ 2026 ແລະ ບອກເຖິງຂັ້ນຕອນການສະໝັກສອບເສັງລະດັບຊາດ ສຳລັບ ທັນຕະແພດ ຮຸ່ນ ທີ 7 ປີ 2026 '' . ຫົວໜ້າຄະນະກຳມະການວິຊາຊີບທັນຕະແພດ ສຈ.(ພິເສດ) ທພ.ອາລຸນຍະເດດ ສິດທິພັນ
	ຄຳເຫັນຂອງ ຫ້ອງການ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ :
	ຄຳເຫັນຂອງ ປະທານ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ :